ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

************

ສຳນັກງານນາຍົກລັດຖະມົນຕີ

ເລກທີ 151 / ນຍ

ວຽງຈັນ,ວັນທີ...16-07-2001

## ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ດຳເນີນການກວດກາ ປັບປຸງຮອບດ້ານ

## ບໍລິສັດທ່ອງທ່ຽວລາວ

- ອີງຕາມມະຕິກອງປະຊຸມໃຫຍ່ຄັ້ງທີ VII ຂອງພັກກ່ຽວກັບວຽກສືບຕໍ່ປັບປຸງລະບຽບການ ແລະ ກົນໄກຄຸ້ມຄອງການເຄື່ອນໄຫວວິສາຫະກິດຂອງລັດ ເພື່ອໃຫ້ມີຄວາມຄ່ອງຕົວ,ມີປະສິດທິຜົນສູງ ແລະເປັນຫຼັກແຫຼ່ງພື້ນຖານໃຫ້ເສດຖະກິດແຫ່ງຊາດ.
- ອີງຕາມກອງປະຊຸມກົມການເມືອງສູນກາງພັກ ຄັ້ງວັນທີ 25-26/8/1998 ທີ່ໄດ້ປຶກສາຫາລື ແລະໃຫ້ທິດຊີ້ນຳ ກ່ຽວກັບການປັບປຸງລັດວິສາຫະກິດ.
- ອີງຕາມໃບສະເໜີຂອງ ທ່ານ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າຄະນະປັບປຸງທຸລະກິດ ສະບັບ ເລກທີ............../ສນຍ/ຄປທ ລົງວັນທີ......../......../2001 ວ່າດ້ວຍຂໍສະເໜີອອກດຳລັດແຕ່ງຕັ້ງຄະນະສະເພາະກິດ ດຳເນີນການກວດກາ ແລະ ປັບປຸງຮອບດ້ານ ບໍລິສັດທ່ອງທ່ຽວລາວ.

## ນາຍົກລັດຖະມົນຕີອອກດຳລັດ

ມາດຕາ 1: ແຕ່ງຕັ້ງຄະນະສະເພາະກິດ ດຳເນີນການກວດກາ ແລະ ປັບປຸງຮອບດ້ານບໍລິສັດ ທ່ອງທ່ຽວລາວ, ເຊິ່ງປະກອບດ້ວຍບັນດາ ທ່ານ ດັ່ງລຸ່ມນີ້;

1/- ທ່ານ ສົມພົງ ມົງຄຸນວິໄລ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ,ຫົວໜ້າຄະນະປັບປຸງທຸລະກິດ ເປັນຫົວໜ້າຄະນະ.

2/- ທ່ານ ແຈ້ງ ໄຊຍະວົງ ປະທານອົງການທ່ອງທ່ຽວແຫ່ງຊາດ ເປັນຮອງ.

3/- ທ່ານ ລັງສີ ສີບຸນເຮືອງ ຮອງປະທານ ອົງການກວດກາແຫ່ງລັດ ເປັນກຳມະການ

ມາດຕາ 2:ຄະນະສະເພາະກິດ ດຳເນີນການກວດກາ ແລະ ປັບປຸງຮອບດ້ານບໍລິສັດ ທ່ອງທ່ຽວລາວ,ມີໜ້າທີ່ ກວດກາ ແລະ ປັບປຸງຮອບດ້ານບໍລິສັດທ່ອງທ່ຽວລາວ,ເປັນຕົ້ນແມ່ນຊອກໃຫ້ເຫັນດ້ານຕັ້ງໜ້າ, ດ້ານຄົງຄ້າງ,ສະພາບການເງິນ ,ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງ,ລະບຽບການຄຸ້ມຄອງ ແລະ ໂຄງປະກອບການຈັດຕັ້ງຂອງບໍລິສັດ, ດ້ານໃດຄວນສົ່ງເສີມ,ດ້ານໃດຄວນໄດ້ປັບປຸງ,ເພື່ອເຮັດໃຫ້ວິສາຫະກິດເຄື່ອນໄຫວຢ່າງມີປະສິດທິຜົນ ແລະເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

ມາດຕາ 3:ມອບໃຫ້ຫົວໜ້າຄະນະສະເພາະກິດດຳເນີນການກວດກາ ແລະ ປັບປຸງຮອບດ້ານບໍລິສັດທ່ອງທ່ຽວລາວ  ແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງໃຫ້ແຕ່ລະທ່ານໃນຄະນະ ແລະ ໃຫ້ ແຕ່ງຕັ້ງ ໜ່ວຍງານວິຊາສະເພາະ ດຳເນີນການກວດກາ ແລະ ປັບປຸງ ຮອບດ້ານບໍລິສັດທ່ອງ ທ່ຽວລາວຂຶ້ນເພື່ອຊ່ວຍຄະນະ ຕາມທີ່ໄດ້ຕົກລົງເຫັນດີນຳກັນໃນກອງປະຊຸມ ຄັ້ງວັນທີ 5/7/2001 ຊຶ່ງປະກອບດ້ວຍ: ຄະນະປັບປຸງທຸລະກິດ, ອົງການທ່ອງທ່ຽວແຫ່ງຊາດ, ອົງການກວດກາແຫ່ງລັດ, ອົງການກວດສອບບັນຊີແຫ່ງລັດ, ກະຊວງການເງິນ

ມາດຕາ 4:ຄະນະສະເພາະກິດ ພ້ອມດ້ວຍໜ່ວຍງານວິຊາສະເພາະດຳເນີນການກວດກາ ແລະ ປັບປຸງຮອບດ້ານບໍລິສັດ ທ່ອງທ່ຽວລາວມີສິດ  ພົວພັນເກັບກຳຂໍ້ມູນ ຊັກຖາມ ນຳທຸກພາກສ່ວນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ຂອງຕົນ

ມາດຕາ 5:ສຳລັບງົບປະມານໃຊ້ເຂົ້າໃນການກວດກາຄັ້ງນີ້ ແມ່ນໃຫ້ຂຶ້ນ ແຜນຂໍນຳໃຊ້ຮ່ວງເງິນແຮລັດຖະບານ ປະຈຳສົກ ປີ 2000 - 2001 ແລະໃຫ້ກຳນົດໄລຍະລົງກວດກາເປັນເວລາ 3 ເດືອນ ,ຫຼັງຈາກລົງກວດກາ ພາຍໃນ 3 ເດືອນແລ້ວຖ້າເຫັນວ່າມີຄວາມຈຳເປັນກໍ່ໃຫ້ສືບຕໍ່ ຂຶ້ນແຜນຂໍເງິນແຮລັດຖະບານລົງກວດກາ ຕາມຄວາມຕ້ອງການຕົວຈິງຂອງວຽກ.

ມາດຕາ 6:ບັນດາ ທ່ານ ທີ່ຖືກແຕ່ງຕັ້ງ , ບັນດາອົງການທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 7: ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະໝົດຜົນສັກສິດຫລັງຈາກຄະນະສະເພາະກິດໄດ້ສຳເລັດໜ້າທີ່ການ ກວດກາ ແລະ ປັບປຸງຮອບດ້ານບໍລິສັດທ່ອງທ່ຽວລາວ

ນາຍົກລັດຖະມົນຕີແຫ່ງ ສ.ປ.ປ ລາວ

ບຸນຍັງ ວໍລະຈິດ